ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 394 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 14 AUG 2014

# ແຈ້ງການ

ເຖິງ: ພໍ່-ແມ່ປະຊາຊົນຊາວນະຄອນຫຼວງວຽງຈັນຕະຫຼອດເຖິງມວນຊົນທົ່ວໄປໃນທົ່ວປະເທດ.

ເລື່ອງ: ທະນະບັດປອມປະເພດໃບ 100000 ກີບ, ໃບ 50000 ກີບ, ໃບ 20000 ກີບ ແລະ ໃບ 10000 ກີບ.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ປະຈຸບັນໄດ້ມີກຸ່ມຄົນບໍ່ດີຈຳນວນໜຶ່ງໄດ້ລັກລອບປອມແປງທະນະບັດປະເພດໃບ 100000 ກີບ, ໃບ 50000 ກີບ, ໃບ 20000 ກີບ ແລະ ໃບ 10000 ກີບ ອອກມາຈໍລະຈອນ ( ໃຊ້-ຈ່າຍ ) ໃນສັງຄົມເປັນຈຳນວນຫຼວງຫຼາຍຕາມທີ່ເຈົ້າໜ້າທີ່ໄດ້ກວດເຫັນ ແລະ ໄດ້ຈັບກຸມຜູ້ກະທຳຜິດຈຳນວນໜຶ່ງມາລົງໂທດຕາມລະບຽບກົດໝາຍແລ້ວ.

ຮູບແບບທະນະບັດປອມມີລັກສະນະ COPY ສີໃສ່ເຈ້ຍ A4 ທຳມະດາ ຖ້າສັງເກດຈະຈຳແນກ ແລະ ເຫັນໄດ້ງ່າຍ. ກ່ອນຈະຮັບ-ຈ່າຍເງິນສົດແຕ່ລະຄັ້ງ ກະລຸນາກວດກາເບິ່ງໃຫ້ລະອຽດ ເພື່ອຫຼີກລ້ຽງການຮັບເອົາເງິນປອມເຂົ້າມາໃນຄອບຄອງ. ຜູ້ທີ່ປອມແປງທະນະບັດແມ່ນຜິດຕໍ່ກົດໝາຍທະນາຄານແຫ່ງ ສປປ ລາວ ມາດຕາ 60 ແລະ ກົດໝາຍອາຍາ ມາດຕາ 63 ແລະ ມາດຕາ 113, ເຮັດໃຫ້ມວນຊົນທັງພາຍໃນ ແລະ ຕ່າງປະເທດ ຂາດຄວາມເຊື່ອໝັ້ນຕໍ່ການຖື ແລະ ຮັກສາເງິນກີບໄວ້ໃນຄອບຄອງ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ພາສີ ພິມມະກອນ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la